**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 2200 /ກປ

ນະຄອນຫລວງວຽງຈັນ, ວັນທີ 14 SEP 2012

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

## ຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28/06/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມການຄົ້ນຄວ້າ ແລະ ເຫັນດີເປັນເອກະພາບຂອງຄະນະຮັບຜິດຊອບປັບປຸງພາລະບົດບາດຂອງກະຊວງກະສິກຳ ແລະ ປ່າໄມ້ຄັ້ງວັນທີ 04/09/2012.
- ອີງຕາມການເຫັນດີເປັນເອກະພາບຂອງຄະນະນຳກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 05/09/2012.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ ແນໃສ່ຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາວຽກງານກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງຕາມທ່າແຮງ ແລະ ຈຸດພິເສດຂອງທ້ອງຖິ່ນ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ ຊຶ່ງເປັນຕົວອັກສອນຫຍໍ້ວ່າ "ກປຂ" ແມ່ນອົງການຈັດຕັ້ງຄຸ້ມຄອງຂັ້ນທ້ອງຖິ່ນ, ມີຖານະເທົ່າທຽມກັບພະແນກການອື່ນຂອງບັນດາກະຊວງ ແລະ ອົງການທຽບເທົ່າກະຊວງທີ່ປະຈຳຢູ່ແຂວງ, ນະຄອນຫລວງ. ມີພາລະບົດບາດ ເປັນເສນາທິການໃຫ້ອຳນາດການປົກຄອງແຂວງ, ນະຄອນຫລວງໃນການກຳນົດ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ຍັງເປັນເສນາທິການດ້ານວິຊາການໃຫ້ແກ່ກະຊວງກະ

ສິກຳ ແລະ ປ່າໄມ້ໃນການກຳນົດແຜນຍຸດທະສາດ, ແຜນງານ ແລະ ໂຄງການຂອງພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ໂດຍສອດຄ່ອງກັບຍຸດທະສາດລວມຂອງກະຊວງ, ບັນດາກົນໄກ ພື້ນຖານກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

1. ປະຕິບັດກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳຕ່າງໆຂອງຂັ້ນເທິງວາງອອກ;
2. ສ້າງແຜນຍຸດທະສາດພັດທະນາກະສິກຳ ແລະ ປ່າໄມ້ແຂວງ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງແຕ່ລະຂະແໜງການ ເພື່ອຈັດຕັ້ງປະຕິບັດຕາມຈຸດພິເສດ ແລະ ທ່າແຮງຂອງທ້ອງຖິ່ນ;
3. ຄົ້ນຄ້ວາສ້າງຮ່າງນິຕິກຳ ແລະ ປັບປຸງລະບຽບການຕ່າງໆຕາມການແບ່ງຂັ້ນຄຸ້ມຄອງ, ປະຕິບັດຕາມກົນໄກ, ລະບຽບການຄຸ້ມຄອງພະນັກງານ ແລະ ມາດຕະຖານຕຳແໜ່ງບໍລິຫານປະເພດຕ່າງໆທີ່ກະຊວງວາງອອກຢ່າງເຂັ້ມງວດ ພ້ອມທັງຈັດຕັ້ງໂຄສະນາເຜີຍແຜ່ໃຫ້ແກ່ສັງຄົມຢ່າງກວ້າງຂວາງ;
4. ຄົ້ນຄ້ວາ ແລະ ນຳສະເໜີການປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ວາງແຜນກໍ່ສ້າງ, ບຳລຸງຍົກລະດັບພະນັກງານ, ຄຸ້ມຄອງ-ນຳໃຊ້ ແລະ ປະຕິບັດນະໂຍບາຍຕ່າງໆໃຫ້ແກ່ພະນັກງານ-ລັດຖະກອນຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້;
5. ສຶກສາຄົ້ນຄ້ວາ, ວາງແຜນພັດທະນາກະສິກຳ ແລະ ປ່າໄມ້ຕາມເຂດແຄ້ວນຢ່າງມີຈຸດສຸມ, ສ້າງເປັນໂຄງການສະເພາະ, ກຳນົດຈັດສັນແບ່ງເຂດທີ່ດິນສຳລັບການປູກ-ການລ້ຽງ ເພື່ອຜະລິດສະບຽງອາຫານ, ຜະລິດສິນຄ້າໂດຍສອດຄ່ອງກັບທ່າແຮງຂອງທ້ອງຖິ່ນ ເພື່ອນຳສະເໜີຂັ້ນເທິງອະນຸມັດຈັດຕັ້ງປະຕິບັດ;
6. ເກັບກຳສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານດ້ານກະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນບັນດາແຜນງານ, ແຜນການ ແລະ ໂຄງການທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຂອງຕົນໃຫ້ມີປະສິດທິຜົນ;
7. ຄົ້ນຄ້ວາຂະຫຍາຍແນວພັນພືດ, ແນວພັນສັດ, ປາ ແລະ ສັດນ້ຳ ທີ່ໃຫ້ຜົນຜະລິດສູງ ພ້ອມທັງໃຫ້ການບໍລິການ, ແນະນຳເຕັກນິກການຜະລິດ ທີ່ເໝາະສົມກັບທ້ອງຖິ່ນແລ້ວມອບໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ສູນບໍລິການເຕັກນິກນຳໄປຊຸກຍູ້ສົ່ງເສີມຊາວກະສິກອນ ແລະ ກຸ່ມການຜະລິດອື່ນໆ;
8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້ສົ່ງເສີມການຈັດຕັ້ງກຸ່ມການຜະລິດ, ກຸ່ມສິນເຊື່ອ, ກອງທຶນພັດທະນາບ້ານ ແລະ ສະຫະກອນກະເສດແບບໃໝ່; ປັບປຸງຄືນກຸ່ມ, ສະຫະກອນທີ່ສ້າງຕັ້ງຂຶ້ນໃຫ້ມີຄວາມເຂັ້ມແຂງ ເພື່ອຈັດຕັ້ງເປັນຫົວໜ່ວຍການຜະລິດຕິດພັນກັບການປຸງແຕ່ງ ແລະ ການບໍລິການ;
9. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດບັນດາໂຄງການຢູ່ທ້ອງຖິ່ນ, ຮ່ວມມື, ຂົນຂວາຍຍາດແຍ່ງການລົງທຶນເຂົ້າໃນການຜະລິດກະສິກຳ ແລະ ປ່າໄມ້ບົນພື້ນຖານກົດໝາຍ ແລະ

ລະບຽບການ ທີ່ກຳນົດໄວ້;

10. ຄົ້ນຄ້ວາປະສານສົມທົບໃນການສ້າງ ແລະ ປັບປຸງສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຂັ້ນເມືອງ ເພື່ອສາມາດບໍລິການ, ຝຶກອົບຮົມຖ່າຍທອດເຕັກນິກວິທະຍາສາດອັນໃໝ່ໃຫ້ປະຊາຊົນ, ຜູ້ຜະລິດ ແລະ ຜູ້ປະກອບການ ພ້ອມທັງສ້າງວິຊາການກະສິກຳ ແລະ ປ່າໄມ້ຂັ້ນບ້ານ;

11. ຊີ້ນຳ, ຊຸກຍູ້ ສົ່ງເສີມການສ້າງເສດຖະກິດຄອບຄົວ, ຈັດຕັ້ງກຸ່ມການຜະລິດ, ກຸ່ມສິນເຊື່ອ, ກອງທຶນພັດທະນາບ້ານ, ສະຫະກອນກະສິກຳ ແລະ ປ່າໄມ້ແບບໃໝ່ ເພື່ອຜະລິດກະສິກຳເປັນສິນຄ້າ, ທັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ ໂດຍການນຳໃຊ້ກົນຈັກເຂົ້າໃນການຜະລິດເຮັດໃຫ້ການຜະລິດມີການຂະຫຍາຍຕົວ ສາມາດຕອບສະໜອງການບໍລິໂພກ, ການປຸງແຕ່ງຢູ່ພາຍໃນ ແລະ ເພື່ອເປັນສິນຄ້າສົ່ງອອກຕິດພັນກັບຕະຫລາດຈຳໜ່າຍ;

12. ດຳເນີນການສຳຫລວດ, ກຳນົດຈັດສັນ, ແບ່ງເຂດທີ່ດິນກະສິກຳ, ດິນບໍລິເວນນ້ຳ, ດິນເຂດກໍ່ສ້າງຊົນລະປະທານ. ສະເໜີຂຶ້ນທະບຽນທີ່ດິນກະສິກຳ, ທີ່ດິນປ່າໄມ້ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຂະແໜງການຕົນ. ກຳນົດລະບຽບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາພ້ອມທັງມອບດິນ-ມອບປ່າໃຫ້ຄອບຄົວ ເພື່ອນຳໃຊ້ເຂົ້າໃນການຜະລິດ, ສ້າງອາຊີບຄົງທີ່ ແລະ ພັດທະນາທີ່ດິນກະສິກຳ ແລະ ປ່າໄມ້ຕາມການອະນຸມັດຂອງລັດຖະບານ ແລະ ຕາມລະບຽບກົດໝາຍ.

13. ຄຸ້ມຄອງ, ກວດກາ, ຢັ້ງຢືນດ້ານສຸຂາອານາໄມ, ສຸຂາອານາໄມພືດ ຕາມມາດຕະຖານຂອງຜະລິດຕະພັນພາຍໃນ ແລະ ສາກົນວາງອອກລວມທັງຄຸ້ມຄອງ, ຕິດຕາມ, ກວດກາການນຳເຂົ້າ-ສົ່ງອອກ, ກວດກາຄຸນນະພາບ, ມາດຕະຖານ ແລະ ປັດໃຈຊຸກຍູ້ການຜະລິດກະສິກຳເຊັ່ນ: ຝຸ່ນວິທະຍາສາດ, ຝຸ່ນຊີວະພາບ, ສານເຄມີກະຕຸ້ນພືດ ແລະ ສັດ, ຢາປາບສັດຕູພືດ, ຢາປົວພະຍາດສັດ, ຢາວັກຊິນ, ອາຫານສັດ, ແນວພັນສັດ; ຄຸ້ມຄອງ, ກວດກາການນຳໃຊ້, ການເຄື່ອນຍ້າຍ, ການປົກປັກຮັກສາພືດ, ສັດລ້ຽງ, ສັດນ້ຳ, ແນວພັນ, ກົນຈັກ ແລະ ອຸປະກອນການຜະລິດກະສິກຳ ແລະ ປ່າໄມ້ຕາມລະບຽບກົດໝາຍຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;

14. ຄຸ້ມຄອງ ແລະ ພັດທະນາລະບົບຊົນລະປະທານ ແລະ ການລະບາຍ ເພື່ອເຮັດໃຫ້ການສະໜອງ ແລະ ນຳໃຊ້ນ້ຳມີປະສິດທິພາບສູງກ້າວໄປສູ່ການສ້າງເປັນລະບົບຊົນລະກະເສດທີ່ກ້າວໜ້າ, ທັນສະໄໝ ແລະ ຍືນຍົງ. ໄປພ້ອມກັບການມອບໂອນກິດຈະການຊົນລະປະທານໃຫ້ຊາວກະສິກອນຄຸ້ມຄອງນຳໃຊ້. ສ້າງຕັ້ງກອງທຶນພັດທະນາຊົນລະປະທານ ໃຫ້ມີລະບຽບການຄຸ້ມຄອງຢ່າງເຂັ້ມງວດ; ສຳຫລວດ, ຕິດຕາມການກໍ່ສ້າງ ແລະ ພັດທະນາລະບົບຊົນລະປະທານຂະໜາດກາງ ແລະ ນ້ອຍຕາມທ່າແຮງຂອງທ້ອງຖິ່ນ; ຊຸກຍູ້ ແລະ ດຶງດູດເອົາການຊ່ວຍເຫລືອຈາກສາກົນ, ປະເທດເພື່ອນບ້ານໃກ້ຄຽງ, ບັນດາບໍລິສັດລັດວິສາຫະກິດ, ຫົວໜ່ວຍທຸລະກິດເອກະຊົນ ແລະ ຊາວກະສິກອນໃຫ້ມີສ່ວນຮ່ວມໃນການກໍ່ສ້າງພື້ນຖານໂຄງລ່າງ;

15. ສຳຫລວດ, ຈັດສັນ, ກຳນົດເຂດປູກຕົ້ນໄມ້ອຸດສາຫະກຳ ແລະ ປູກຕົ້ນໄມ້ເພື່ອສິ່ງແວດລ້ອມ; ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ບໍລິສັດທັງພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນເຂົ້າໃນການປູກໄມ້ເປັນສິນຄ້າ; ວາງແຜນການຄຸ້ມຄອງ ແລະ ປົກປັກຮັກສາປ່າຜະລິດ, ປ່າໄມ້ບ້ານທີ່ຂະແໜງການກະສິກຳ ແລະ ປ່າໄມ້ຮັບຜິດຊອບ ພ້ອມທັງມີມາດຕະການປ້ອງກັນໄຟໄໝ້ລາມປ່າຢູ່ທ້ອງຖິ່ນຂອງຕົນ;

16. ເປັນເຈົ້າການຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາການທຳລາຍປ່າໄມ້, ກຳນົດມາດຕະການຕ້ານ ແລະ

ສະກັດກັ້ນການລັກລອບຕັດໄມ້, ການຊື້ຂາຍ, ການເຄື່ອນຍ້າຍເຄື່ອງປ່າຂອງດົງ, ຊີວະນາໆພັນ, ສັດນ້ຳ-ສັດປ່າທີ່ຜິດກົດໝາຍ; ດຳເນີນການສືບສວນ-ສອບສວນຕໍ່ຜູ້ກະທຳຜິດກົດໝາຍປ່າໄມ້, ກົດໝາຍສັດນ້ຳ-ສັດປ່າ ຕາມລະບຽບກົດໝາຍທີ່ກຳນົດໄວ້ໃນຂອບເຂດຄວາມຮັບຜິດຊອບຂອງຕົນບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

17. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ນິຕິກຳ ແລະ ລະບຽບການຕ່າງໆທີ່ຂັ້ນເທິງວາງອອກໃຫ້ມີປະສິດທິຜົນສູງ;
18. ເປັນເຈົ້າການປະກອບສ່ວນ ແລະ ມີຄວາມຮັບຜິດຊອບສູງ ເຂົ້າໃນວຽກງານພັດທະນາຊົນນະບົດ ແລະ ຈຸດສຸມບູລິມະສິດຂອງລັດຖະບານ ຕາມຂອບເຂດຄວາມຮັບຜິດຊອບ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ໂດຍທັນເອົາພະນັກງານລົງຊ່ວຍເມືອງ, ສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້, ກຸ່ມບ້ານພັດທະນາ ແລະ ບັນດາບ້ານໃນເຂດຈຸດສຸມ ແນໃສ່ຊຸກຍູ້ສົ່ງເສີມການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າ ສ້າງລາຍຮັບໃຫ້ປະຊາຊົນສູງຂຶ້ນ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແລະ ລຶບລ້າງຄວາມທຸກຍາກຂອງ ປະຊາຊົນໃຫ້ໄດ້ຕາມຄາດໝາຍຂອງພັກ-ລັດກຳນົດໄວ້;
19. ຂຶ້ນແຜນງົບປະມານຂອງພະແນກ, ຄຸ້ມຄອງບໍລິຫານ-ການເງິນ, ຊັບສິນພ້ອມທັງຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫລຸບລາຍງານໃຫ້ຂັ້ນເທິງຕາມລະບຽບການທີ່ກຳນົດໄວ້;
20. ປະຕິບັດໜ້າທີ່ອື່ນໆຕາມການຕົກລົງ ແລະ ມອບໝາຍຈາກຂັ້ນເທິງ.

## ມາດຕາ 4. ຂອບເຂດສິດ

1. ຄຸ້ມຄອງແບ່ງປັນ ແລະ ມອບໝາຍແຜນການ, ງົບປະມານ, ພາຫະນະ ແລະ ອຸປະກອນທີ່ໄດ້ຮັບອະນຸມັດຈາກຂັ້ນເທິງໃຫ້ບັນດາຂະແໜງການ, ສູນ, ສະຖານີ, ໂຄງການອ້ອມຂ້າງພະແນກ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ຫົວໜ່ວຍວິຊາການທີ່ຂຶ້ນກັບຕົນ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງ;
2. ສຶກສາຄົ້ນຄ້ວາ ແລະ ນຳສະເໜີ ກ່ຽວກັບໂຄງປະກອບການຈັດຕັ້ງ, ຈຳນວນຕຳແໜ່ງງານ, ລະບອບແບບແຜນວິທີເຮັດວຽກ; ສະເໜີສ້າງຕັ້ງ, ປັບປຸງ ຫລື ຍຸບເລີກຂະແໜງການ, ໜ່ວຍງານວິຊາການທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;
3. ຄຸ້ມຄອງ, ນຳໃຊ້, ຈັດວາງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ;
4. ຄົ້ນຄ້ວາ, ນຳສະເໜີຂັ້ນເທິງກ່ຽວກັບການຂໍອະນຸມັດລົງທຶນຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດໃນຂະແໜງກະສິກຳ ແລະ ປ່າໄມ້ ຕາມລະບົບແບ່ງຂັ້ນຄຸ້ມຄອງ, ຕະຫລອດເຖິງການສະເໜີຂໍອະນຸມັດສ້າງຕັ້ງ ຫລື ຍຸບເລີກກິດຈະການປຸງແຕ່ງ ແລະ ການຈັດຕັ້ງການຜະລິດກະສິກຳ ແລະ ປ່າໄມ້ຕາມກົດໝາຍວ່າດ້ວຍການລົງທຶນຂອງ ສປປ ລາວ;
5. ກວດກາ, ຢັ້ງຢືນຄຸນນະພາບ, ອະນຸຍາດສົ່ງອອກ ແລະ ນຳເຂົ້າ ບັນດາວັດຖຸອຸປະກອນ, ປັດໄຈການຜະລິດ, ຜະລິດຕະພັນກະສິກຳ ແລະ ປ່າໄມ້ຕາມແຜນການທີ່ໄດ້ຮັບອະນຸມັດ; ຄຸ້ມຄອງກວດກາ, ກັກກັນພືດ ແລະ ສັດ ຢູ່ດ່ານຊາຍແດນລະຫວ່າງປະເທດພ້ອມທັງວາງມາດຕະການຕິດຕາມ ແລະ ສະກັດກັ້ນການແຜ່ລະບາດຂອງສັດຕູພືດ, ພະຍຸ ແລະ ພະຍາດສັດໃຫ້ທັນເວລາ;

ລະບຽບການ ທີ່ກຳນົດໄວ້;

10. ຄົ້ນຄ້ວາປະສານສົມທົບໃນການສ້າງ ແລະ ປັບປຸງສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ຂັ້ນແຂວງ, ຂັ້ນເມືອງ ເພື່ອສາມາດບໍລິການ, ຝຶກອົບຮົມຖ່າຍທອດເຕັກນິກວິທະຍາສາດອັນໃໝ່ໃຫ້ປະຊາຊົນ, ຜູ້ຜະລິດ ແລະ ຜູ້ປະກອບການ ພ້ອມທັງສ້າງວິຊາການກະສິກຳ ແລະ ປ່າໄມ້ຂັ້ນບ້ານ;

11. ຊີ້ນຳ, ຊຸກຍູ້ ສົ່ງເສີມການສ້າງເສດຖະກິດຄອບຄົວ, ຈັດຕັ້ງກຸ່ມການຜະລິດ, ກຸ່ມສິນເຊື່ອ, ກອງທຶນພັດທະນາບ້ານ, ສະຫະກອນກະສິກຳ ແລະ ປ່າໄມ້ແບບໃໝ່ ເພື່ອຜະລິດກະສິກຳເປັນສິນຄ້າ, ທັນເປັນອຸດສາຫະກຳ ແລະ ທັນສະໃໝເທື່ອລະກ້າວ ໂດຍການນຳໃຊ້ກົນຈັກເຂົ້າໃນການຜະລິດເຮັດໃຫ້ການຜະລິດມີການຂະຫຍາຍຕົວ ສາມາດຕອບສະໜອງການບໍລິໂພກ, ການປຸງແຕ່ງຢູ່ພາຍໃນ ແລະ ເພື່ອເປັນສິນຄ້າສົ່ງອອກຕິດພັນກັບຕະຫລາດຈຳໜ່າຍ;

12. ດຳເນີນການສຳຫລວດ, ກຳນົດຈັດສັນ, ແບ່ງເຂດທີ່ດິນກະສິກຳ, ດິນບໍລິເວນນ້ຳ, ດິນເຂດກໍ່ສ້າງຊົນລະປະທານ. ສະເໜີຂຶ້ນທະບຽນທີ່ດິນກະສິກຳ, ທີ່ດິນປ່າໄມ້ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຂະແໜງການຕົນ. ກຳນົດລະບຽບການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາພ້ອມທັງມອບດິນ-ມອບປ່າໃຫ້ຄອບຄົວ ເພື່ອນຳໃຊ້ເຂົ້າໃນການຜະລິດ, ສ້າງອາຊີບຄົງທີ່ ແລະ ພັດທະນາທີ່ດິນກະສິກຳ ແລະ ປ່າໄມ້ຕາມການອະນຸມັດຂອງລັດຖະບານ ແລະ ຕາມລະບຽບກົດໝາຍ.

13. ຄຸ້ມຄອງ, ກວດກາ, ຢັ້ງຢືນດ້ານສຸຂາອານາໄມ, ສຸຂາອານາໄມພືດ ຕາມມາດຕະຖານຂອງຜະລິດຕະພັນພາຍໃນ ແລະ ສາກົນວາງອອກລວມທັງຄຸ້ມຄອງ, ຕິດຕາມ, ກວດກາການນຳເຂົ້າ-ສົ່ງອອກ, ກວດກາຄຸນນະພາບ, ມາດຕະຖານ ແລະ ປັດໃຈຊຸກຍູ້ການຜະລິດກະສິກຳເຊັ່ນ: ຝຸ່ນວິທະຍາສາດ, ຝຸ່ນຊີວະພາບ, ສານເຄມີກະຕຸ້ນພືດ ແລະ ສັດ, ຢາປາບສັດຕູພືດ, ຢາປົວພະຍາດສັດ, ຢາວັກຊີນ, ອາຫານສັດ, ແນວພັນສັດ; ຄຸ້ມຄອງ, ກວດກາການນຳໃຊ້, ການເຄື່ອນຍ້າຍ, ການປົກປັກຮັກສາພືດ, ສັດລ້ຽງ, ສັດນ້ຳ, ແນວພັນ, ກົນຈັກ ແລະ ອຸປະກອນການຜະລິດກະສິກຳ ແລະ ປ່າໄມ້ຕາມລະບຽບກົດໝາຍຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;

14. ຄຸ້ມຄອງ ແລະ ພັດທະນາລະບົບຊົນລະປະທານ ແລະ ການລະບາຍ ເພື່ອເຮັດໃຫ້ການສະໜອງ ແລະ ນຳໃຊ້ນ້ຳມີປະສິດທິພາບສູງກ້າວໄປສູ່ການສ້າງເປັນລະບົບຊົນລະກະເສດທີ່ກ້າວໜ້າ, ທັນສະໃໝ ແລະ ຍືນຍົງ. ໄປພ້ອມກັບການມອບໂອນກິດຈະການຊົນລະປະທານໃຫ້ຊາວກະສິກອນຄຸ້ມຄອງນຳໃຊ້. ສ້າງຕັ້ງກອງທຶນພັດທະນາຊົນລະປະທານ ໃຫ້ມີລະບຽບການຄຸ້ມຄອງຢ່າງເຂັ້ມງວດ; ສຳຫລວດ, ຕິດຕາມການກໍ່ສ້າງ ແລະ ພັດທະນາລະບົບຊົນລະປະທານຂະໜາດກາງ ແລະ ນ້ອຍຕາມທ່າແຮງຂອງທ້ອງຖິ່ນ; ຊຸກຍູ້ ແລະ ດຶງດູດເອົາການຊ່ວຍເຫລືອຈາກສາກົນ, ປະເທດເພື່ອນບ້ານໃກ້ຄຽງ, ບັນດາບໍລິສັດລັດວິສາຫະກິດ, ຫົວໜ່ວຍທຸລະກິດເອກະຊົນ ແລະ ຊາວກະສິກອນໃຫ້ມີສ່ວນຮ່ວມໃນການກໍ່ສ້າງພື້ນຖານໂຄງລ່າງ;

15. ສຳຫລວດ, ຈັດສັນ, ກຳນົດເຂດປູກຕົ້ນໄມ້ອຸດສາຫະກຳ ແລະ ປູກຕົ້ນໄມ້ເພື່ອສິ່ງແວດລ້ອມ; ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ບໍລິສັດທັງພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນເຂົ້າໃນການປູກໄມ້ເປັນສິນຄ້າ; ວາງແຜນການຄຸ້ມຄອງ ແລະ ປົກປັກຮັກສາປ່າຜະລິດ, ປ່າໄມ້ບ້ານທີ່ຂະແໜງການກະສິກຳ ແລະ ປ່າໄມ້ຮັບຜິດຊອບ ພ້ອມທັງມີມາດຕະການປ້ອງກັນໄຟໄໝ້ລາມປ່າຢູ່ທ້ອງຖິ່ນຂອງຕົນ;

16. ເປັນເຈົ້າການຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາການທຳລາຍປ່າໄມ້, ກຳນົດມາດຕະການຕ້ານ ແລະ

6. ດຳເນີນການກວດກາຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກຳ ແລະ ປ່າໄມ້ ເພື່ອສະຫລຸບສັງລວມ, ວິໃຈ ແລະ ປະເມີນຜົນໃຫ້ເຫັນດ້ານດີ, ດ້ານອ່ອນ ແລະ ຄົງຄ້າງແລ້ວວາງມາດຕະການແກ້ໄຂໃນຕໍ່ໜ້າ;
7. ອອກແຈ້ງການ, ໃຫ້ຄຳແນະນຳຕ່າງໆຕາມພາລະບົດບາດຕໍ່ບັນດາຂະແໜງການອ້ອມຂ້າງພະແນກ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດທຸລະກິດກະສິກຳ ແລະ ປ່າໄມ້ ທີ່ນອນຢູ່ໃນການຄຸ້ມຄອງຂອງຕົນ;
8. ຄົ້ນຄວ້າ, ວາງແຜນ ແລະ ນຳສະເໜີການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານພັດທະນາຊົນນະບົດ ເພື່ອຊອກຫາຮູບແບບ ແລະ ວິທີການທີ່ເໝາະສົມໃນການຈັດສັນພູມລຳເນົາ, ການຝຶກອົບຮົມວິຊາຊີບ ແລະ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນພາຍຫລັງຢຸດຕິການຖາງປ່າເຮັດໄຮ່;
9. ປະຕິບັດສິດອື່ນໆຕາມການຕົກລົງ ແລະ ມອບໝາຍຈາກຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບກົງຈັກ

ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫລວງ ປະກອບດ້ວຍບັນດາຂະແໜງ, ຫ້ອງການ ແລະ ກອງ ດັ່ງນີ້:

1. ຫ້ອງການບໍລິຫານ
2. ຂະແໜງ ຈັດຕັ້ງ ແລະ ພະນັກງານ
3. ຂະແໜງ ກວດກາລັດ
4. ຂະແໜງ ແຜນການ ແລະ ການຮ່ວມມື
5. ຂະແໜງ ປູກຝັງ
6. ຂະແໜງ ລ້ຽງສັດ ແລະ ການປະມົງ
7. ຂະແໜງ ປ່າໄມ້
8. ຂະແໜງ ຊົນລະປະທານ
9. ກອງກວດກາປ່າໄມ້
10. ຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ
11. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ
12. ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

ນອກຈາກນີ້ ຍັງມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້, ສະຖານີຂະຫຍາຍແນວພັນພືດ ແລະ ສັດ, ໂຄງການ ແລະ ບັນດາຫົວໜ່ວຍວິສາຫະກິດທຸລະກິດດ້ານກະສິກຳ ແລະ ປ່າໄມ້.

### ມາດຕາ 6. ໂຄງປະກອບດ້ານບຸກຄະລາກອນ

1. ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງປະກອບດ້ວຍຫົວໜ້າພະແນກ 1 ທ່ານ ແລະ ຮອງຫົວໜ້າພະແນກຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງຈາກເຈົ້າແຂວງ, ເຈົ້າຄອງນະຄອນ, ບົນພື້ນຖານມາດຕະຖານ ເງື່ອນໄຂຂອງຕຳແໜ່ງບໍລິຫານທີ່ກະຊວງກະສິກຳ

ແລະ ປ່າໄມ້ໄດ້ວາງອອກ ແລະ ການປະສານສົມທົບຂໍຄໍາເຫັນເປັນລາຍລັກອັກສອນຈາກລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້;

2. ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ແລະ ນະຄອນຫລວງ ມີຫ້ອງການ, ຂະແໜງການ, ກອງ ແລະ ສູນຈໍານວນໜຶ່ງ. ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ, ບັນດາຂະແໜງການ, ກອງ ແລະ ສູນ ໄດ້ຮັບການແຕ່ງຕັ້ງ ຫລື ປົດຕໍາແໜ່ງຈາກເຈົ້າແຂວງ, ເຈົ້າຄອງນະຄອນ ບົນພື້ນຖານມາດຕະຖານເງື່ອນໄຂຂອງຕໍາແໜ່ງບໍລິຫານທີ່ກະຊວງກະສິກໍາ ແລະ ປ່າໄມ້ໄດ້ວາງອອກ ແລະ ການປະສານສົມທົບຂໍຄໍາເຫັນເປັນລາຍລັກອັກສອນ ຈາກລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້;

3. ແຕ່ລະຂະແໜງ, ຫ້ອງການ, ກອງ ແລະ ສູນ ປະກອບດ້ວຍໜ່ວຍງານ ແລະ ພະນັກງານວິຊາການ ຕາມການກໍານົດຕໍາແໜ່ງງານ ທີ່ຂັ້ນເທິງອະນຸມັດ.

## ໝວດທີ IV
## ຫລັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 7. ຫລັກການ

1. ປະຕິບັດຫລັກການລວມສູນປະຊາທິປະໄຕ, ນໍາພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງບົນພື້ນຖານມີການແບ່ງງານກັນຢ່າງລະອຽດຈະແຈ້ງໃນໝູ່ຄະນະ ພ້ອມທັງມອບຄວາມຮັບຜິດຊອບ ແລະ ສິດໃນການຕັດສິນບັນຫາພາຍໃນຂອບເຂດຂອງແຕ່ລະຂັ້ນ;

ມາດຕາ 8. ແບບແຜນວິທີເຮັດວຽກ

1. ຫົວໜ້າພະແນກ ມີຄວາມຮັບຜິດຊອບໂດຍກົງຕໍ່ຄະນະລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ແລະ ການນໍາຂອງແຂວງ, ນະຄອນຫລວງກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ; ບັນດາຮອງຫົວໜ້າພະແນກມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງຄວາມຮັບຜິດຊອບ ແລະ ມອບໝາຍຂອງຫົວໜ້າພະແນກ;
2. ຫົວໜ້າພະແນກ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສໍາຄັນ, ກໍລະນີຕິດຂັດ ຫລື ໄປເຄື່ອນໄຫວວຽກງານທາງໄກຕ້ອງມອບສິດປະຈໍາການຊົ່ວຄາວໃຫ້ຮອງຫົວໜ້າພະແນກຜູ້ໃດຜູ້ໜຶ່ງວ່າການແທນ ແລະ ເມື່ອຫົວໜ້າພະແນກກັບຄືນມາປະຈໍາການ, ຜູ້ວ່າການແທນຕ້ອງລາຍງານວຽກງານທີ່ຕົນໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າຊາບ;
3. ການເຄື່ອນໄຫວຂອງພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ແລະ ນະຄອນຫລວງແມ່ນບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ຫັນເອົາແຜນຍຸດທະສາດພັດທະນາກະສິກໍາ ແລະ ປ່າໄມ້ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນຕົນມາເປັນແຜນຍຸດທະສາດເພື່ອຈັດຕັ້ງປະຕິບັດ; ບັນດາຂະແໜງການ, ຫ້ອງການ, ກອງ, ສູນ, ສະຖານີ, ໂຄງການ ແລະ ຫົວໜ່ວຍວິຊາການທີ່ຂຶ້ນກັບພະແນກ, ມີໜ້າທີ່ຮັບຜິດຊອບໃນການປຸກລະດົມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນການຂອງພະແນກ, ຂະແໜງການ ແລະ ໜ່ວຍງານຂອງຕົນໃຫ້ສໍາເລັດຢ່າງມີປະສິດທິຜົນ;

4. ບັນດາເອກະສານກ່ຽວກັບວຽກງານກະສິກຳ ແລະ ປ່າໄມ້ ທີ່ເປັນຂໍ້ສະເໜີມາຈາກພາກສ່ວນຕ່າງໆທີ່ກ່ຽວພັນກັບພາກສ່ວນໃດ ແມ່ນພາກສ່ວນນັ້ນເປັນຜູ້ຄົ້ນຄວ້າ ແລະ ປະກອບຄຳເຫັນເສຍກ່ອນຈຶ່ງນຳສະເໜີຫົວໜ້າພະແນກພິຈາລະນາຕາມລະບຽບການ;
5. ມີການປະສານສົມທົບວຽກງານນຳບັນດາກົມ, ຫ້ອງການ, ສະຖາບັນ, ວິທະຍາໄລ, ໂຮງຮຽນທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາພະແນກການຕ່າງໆທີ່ປະຈຳຢູ່ແຂວງ ແລະ ນະຄອນຫລວງ;
6. ປະຕິບັດລະບອບປະຊຸມ, ສ່ອງແສງລາຍງານປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ, ສະຫລຸບສັງລວມສະພາບການຮອບດ້ານເພື່ອລາຍງານໃຫ້ຄະນະລັດຖະມົນຕີກະຊວງກະສິກຳ ແລະປ່າໄມ້, ການນຳຂອງແຂວງ ແລະ ນະຄອນຫລວງຕາມເວລາທີ່ກຳນົດໄວ້.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ງົບປະມານ ແລະ ຕາປະທັບ**

ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫລວງ ມີງົບປະມານ ແລະ ຕາປະທັບເປັນຂອງຕົນເອງ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫລວງເປັນຜູ້ກຳນົດລະອຽດກ່ຽວກັບພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງຫ້ອງການ, ບັນດາຂະແໜງ, ກອງ, ສູນ, ໜ່ວຍງານ ແລະ ໂຄງການ ທີ່ຂຶ້ນກັບຕົນໂດຍມີການປະສານຢ່າງກົມກ່ຽວກັບບັນດາກົມ, ຫ້ອງການ ແລະ ສະຖາບັນອ້ອມຂ້າງກະຊວງ ພ້ອມທັງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເປັນກົດລະບຽບພາຍໃນຂອງຕົນ ເພື່ອຈັດຕັ້ງປະຕິບັດ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫລວງ, ຫ້ອງການ, ບັນດາກົມ, ສະຖາບັນ, ບັນດາຂະແໜງການ, ສູນ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ, ວິທະຍາໄລ, ໂຮງຮຽນ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 1064 /ກປ, ລົງວັນທີ 23/10/2007 ວ່າດ້ວຍພາລະບົດບາດຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ສີພັນດອນ ສີ...